ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 06 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 05.01.2018

# ດຳລັດ
## ວ່າດ້ວຍ ການສ້າງຕັ້ງປ່າປ້ອງກັນແຫຼ່ງນ້ຳ ຍອດນ້ຳຊັນ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມໜັງສືສະເໜີ ສະບັບເລກທີ 63/ກປ, ລົງວັນທີ 8 ທັນວາ 2017 ຂອງກະຊວງກະສິກຳ ແລະ ປ່າໄມ້.

## ນາຍົກລັດຖະມົນຕີ ອອກດຳລັດ :

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ວາງອອກເພື່ອປະກາດສ້າງຕັ້ງປ່າປ້ອງກັນແຫຼ່ງນ້ຳ ຂອງໂຄງການເຂື່ອນໄຟຟ້ານ້ຳຕົກນ້ຳຊັນ 3 A ແລະ 3 B ໂດຍການຫັນປ່ຽນຈາກເນື້ອທີ່ປ່າຜະລິດແຫ່ງຊາດ ນ້ຳຈຶ່ງ-ນ້ຳງຽບ, ແຂວງຊຽງຂວາງ ເຊິ່ງມີເນື້ອທີ່ທັງໝົດ 122.259 ( ໜຶ່ງແສນຊາວສອງພັນສອງຮ້ອຍຫ້າສິບເກົ້າ ) ເຮັກຕາ ຫັນປ່ຽນມາເປັນປ່າປ້ອງກັນແຫຼ່ງນ້ຳ ຍອດນ້ຳຊັນ ໃຫ້ແກ່ໂຄງການເຂື່ອນໄຟຟ້ານ້ຳຕົກນ້ຳຊັນ 3 A ແລະ 3 B ຈຳນວນ 13.523 ( ສິບສາມພັນຫ້າຮ້ອຍຊາວສາມ ) ເຮັກຕາ. ຊຶ່ງຕໍ່ໄປເອີ້ນວ່າ " **ປ່າປ້ອງກັນແຫຼ່ງນ້ຳ ຍອດນ້ຳຊັນ** ".

ການສ້າງຕັ້ງປ່າປ້ອງກັນແຫຼ່ງນ້ຳ ຍອດນ້ຳຊັນ ແມ່ນແນໃສ່ຈຸດປະສົງຕົ້ນຕໍ ດັ່ງລຸ່ມນີ້:

1. ເພື່ອຄຸ້ມຄອງ,ປົກປັກຮັກສາປ່າໄມ້, ຊັບພະຍາກອນປ່າໄມ້, ພັນສັດນ້ຳ-ສັດປ່າ ແລະ ແຫຼ່ງກຳເນີດຕົ້ນນ້ຳລຳທານ ໃຫ້ມີນ້ຳໄຫຼຕະຫຼອດປີ, ຕອບສະໜອງນ້ຳໃຫ້ແກ່ການຜະລິດພະລັງງານໄຟຟ້າ ຂອງໂຄງການເຂື່ອນໄຟຟ້ານ້ຳຕົກນ້ຳຊັນ 3 A ແລະ 3 B ມີຄວາມຍືນຍົງ.
2. ເພື່ອປົກປັກຮັກສາຄວາມອຸດົມສົມບູນຂອງທຳມະຊາດ,ຊີວະນາໆພັນ ແລະ ປົກປັກຮັກສາສິ່ງແວດລ້ອມ, ປ້ອງກັນການເຊາະເຈື່ອນລົງສູ່ທ້ອງອ່າງເກັບນ້ຳ ແລະ ປົກປັກຮັກສາຄຸນນະພາບຂອງດິນ.
3. ເພື່ອອະນຸລັກຮັກສາໄວ້ຄວາມສວຍງາມຂອງທິວທັດທຳມະຊາດ, ເປັນບ່ອນພັກຜ່ອນ, ທ່ອງທ່ຽວ, ສຶກສາຄົ້ນຄວ້າທາງດ້ານວິທະຍາສາດ ແລະ ເປັນບ່ອນອະນຸລັກປົກປັກຮັກສາແຫຼ່ງແກ່ນພັນໄມ້ພື້ນເມືອງ ແນໃສ່ຮັບໃຊ້ການຂະຫຍາຍພັນ.
4. ເພື່ອການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້ແບບມີສ່ວນຮ່ວມກັບປະຊາຊົນ ແລະ ຮັບປະກັນການນຳໃຊ້ຜະລິດຕະພົນປ່າໄມ້ແບບຍືນຍົງ, ບໍ່ບົກແຫ້ງ, ບໍ່ກະທົບຕໍ່ໂຄງສ້າງຂອງປ່າ.

**ມາດຕາ 2 ຂອບເຂດປ່າປ້ອງກັນແຫຼ່ງນ້ຳ ຍອດນ້ຳຊັນ.**

ຂອບເຂດປ່າປ້ອງກັນແຫຼ່ງນ້ຳ ຍອດນ້ຳຊັນ ແມ່ນອີງໃສ່ແຜນທີ່ພູມີປະເທດ ມາດຕາສ່ວນ 1: 100.000 ໂດຍຖືເອົາເສັ້ນແວງ ແລະ ເສັ້ນຂະໜານ ເປັນຫຼັກສົມທຽບໃສ່ພື້ນທີ່ຕົວຈິງ ຄື: ສັນພູ ຫຼື ສັນປັນນ້ຳຂອງຍອດນ້ຳຊັນ, ແມ່ນ້ຳ, ເສັ້ນທາງ, ຈຸດລະດັບຕ່ຳສຸດ ແລະ ສູງສຸດເປັນຂີດໝາຍ ເພື່ອເຮັດໃຫ້ອຳນາດການປົກຄອງທ້ອງຖິ່ນ ຕະຫຼອດຮອດພໍ່ແມ່

ປະຊາຊົນບັນດາເຜົ່າໄດ້ຮັບຮູ້ ແລະ ພ້ອມທັງໃຫ້ຄວາມຮ່ວມມືໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ແບບຍືນຍົງ.

**ມາດຕາ 3 ທີ່ຕັ້ງ, ເນື້ອທີ່ ແລະ ຂອບເຂດຊາຍແດນ.**

ປ່າປ້ອງກັນແຫຼ່ງນ້ຳ ຍອດນ້ຳຊັນ ຕັ້ງຢູ່ເມືອງຄູນ ແລະ ເມືອງໝອກ, ແຂວງຊຽງຂວາງ ແລະ ເມືອງທ່າໂທມ, ແຂວງໄຊສົມບູນ, ຕັ້ງຢູ່ເສັ້ນແວງທີ 103°35' 03" ຫາ 103°48' 18" ແລະ ເສັ້ນຂະໜານທີ 19°03' 47" ຫາ 19°13' 34".

ປ່າປ້ອງກັນແຫຼ່ງນ້ຳ ຍອດນ້ຳຊັນ ມີເນື້ອທີ່ 13.523 ( ສິບສາມພັນຫ້າຮ້ອຍຊາວສາມ ) ເຮັກຕາ, ໃນນັ້ນ: ກວມເອົາເມືອງຄູນ 3,660 ( ສາມພັນຫົກຮ້ອຍຫົກສິບ ) ເຮັກຕາ ເທົ່າກັບ 27,07% ແລະ ເມືອງທ່າໂທມ ຈຳນວນ 279 ( ສອງຮ້ອຍເຈັດສິບເກົ້າ ) ເຮັກຕາ ເທົ່າກັບ 2,06%, ຊຶ່ງມີຂອບເຂດຊາຍແດນລະອຽດ ດັ່ງລຸ່ມນີ້:

1. ທິດເໜືອນອນຢູ່ໃນເຂດເມືອງໝອກ ຕິດກັບປ່າຜະລິດແຫ່ງຊາດ ນ້ຳຈີງ-ນ້ຳງຽບ.
2. ທິດໃຕ້ ນອນໃນເຂດເມືອງທ່າໂທມ ຕິດກັບປ່າປ້ອງກັນແຫ່ງຊາດ ນ້ຳຊັນ-ນ້ຳເພືອກ.
3. ທິດຕາເວັນອອກ ນອນເຂດເມືອງໝອກໃໝ່ ຕິດກັບປ່າຜະລິດແຫ່ງຊາດ ນ້ຳຈີງ-ນ້ຳງຽບ.
4. ທິດຕາເວັນຕົກ ນອນໃນເຂດເມືອງຄູນ ຕິດກັບປ່າຜະລິດແຫ່ງຊາດ ນ້ຳຈີງ-ນ້ຳງຽບ ແລະ ເຂດທີ່ດິນກະສິກຳຂອງປະຊາຊົນ ແລະ ເນື້ອທີ່ອື່ນໆ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ຈະເປັນເຈົ້າການປະສານສົມທົບກັບອົງການປົກຄອງແຂວງຊຽງຂວາງ, ພາກສ່ວນທີ່ກ່ຽວຂ້ອງ ແລະ ບໍລິສັດໄຟຟ້ານ້ຳຊັນ 3 A ແລະ 3 B ຈຳກັດຜູ້ດຽວ ເພື່ອດຳເນີນການສຳຫຼວດ, ເກັບກຳຂໍ້ມູນພື້ນທີ່ຕົວຈິງໃຫ້ຈະແຈ້ງ ແລະ ດຳເນີນການສ້າງແຜນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ໃນປ່າປ້ອງກັນແຫຼ່ງນ້ຳ ຍອດນ້ຳຊັນ ໃຫ້ມີຄວາມຍືນຍົງຕະຫຼອດໄປ ແລະ ສ້າງຕັ້ງຄະນະກຳມະການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ໃນເຂດອ່າງຮັບນ້ຳແຫຼ່ງນ້ຳ ຂອງໂຄງການເຂື່ອນໄຟຟ້ານ້ຳຕົກ ນ້ຳຊັນ 3 A ແລະ 3 B ໂດຍນຳໃຊ້ງົບປະມານ ທີ່ລະບຸໄວ້ໃນມາດຕາ 8.13 ຂອງສັນຍາສຳປະທານ ( CA ) ສະບັບລົງວັນທີ 22 ພະຈິກ 2013 ເພື່ອມາຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ. ບັນດາຂໍ້ກຳນົດ, ຄຳສັ່ງ, ລະບຽບການ ແລະ ການອະນຸຍາດຕ່າງໆ ໃນເມື່ອກ່ອນ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ